ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ກະສິກໍາ ແລະ ປ່າໄມ້

ຫ້ອງການກະຊວງ

ເລກທີ 3583---/ຫກ

ນະຄອນຫຼວງວຽງຈັນ, ວັນທີ 09 SEP 2022

# ແຈ້ງເຊີນເຂົ້າຮ່ວມປະມູນເປີດກວ້າງ

ການຈັດຊື້ ເຄື່ອງເອເລັກໂຕຣນິກ ເພື່ອປະກອບໃຫ້ແກ່ຫ້ອງການ, ບັນດາກົມ, ສະຖາບັນ ໂຮງຮຽນ ແລະ ບັນດາວິທະຍາໄລ ອ້ອມຂ້າງກະຊວງກະສິກໍາ ແລະ ປ່າໄມ້ ປະຈໍາປີ 2022

- ອີງຕາມ ກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ສະບັບເລກທີ 14/ສພຊ, ລົງວັນທີ 5 ກໍລະກົດ 2012.
- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017.
- ອີງຕາມ ດໍາລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 603/ນຍ, ລົງວັນທີ 15/10/2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງກະສິກໍາ ແລະ ປ່າໄມ້.
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ສະບັບເລກທີ 2710/ກປ, ລົງວັນທີ 27/05/2022 ວ່າດ້ວຍການແຕ່ງຕັ້ງຄະນະກໍາມະການຈັດຕັ້ງປະຕິບັດວຽກງານ ຈັດຊື້-ຈັດຈ້າງ ຊັບສິນບັດຄົງທີ່ ນໍາໃຊ້ງົບປະມານພາກ 66 ຊື້ຊັບສິນບັດຄົງທີ່ ຮັບໃຊ້ກິ່ງຈັກບໍລິຫານ ປະຈໍາປີ 2022.

ຫ້ອງການກະຊວງ ກະສິກໍາ ແລະ ປ່າໄມ້ ຂໍຖືເປັນກຽດແຈ້ງມາຍັງບັນດາບໍລິສັດ/ຫ້າງຮ້ານ: ທີ່ໄດ້ດໍາເນີນທຸລະກິດກ່ຽວກັບການຂາຍສິນຄ້າປະເພດ ເຄື່ອງເອເລັກໂຕຣນິກ ຊາບວ່າ: ທາງຫ້ອງການກະຊວງ ຈະໄດ້ເປີດຂາຍຊອງປະມູນ ເປີດກວ້າງການຈັດຊື້-ຈັດຈ້າງ ເຄື່ອງອຸປະກອນຮັບໃຊ້ກົງຈັກບໍລິຫານ ປະຈໍາປີ 2022 (ນໍາໃຊ້ງົບປະມານລັດ) ລາຍລະອຽດມີລຸ່ມນີ້:

1. ບ່ອນຊື້ ແລະ ສົ່ງຊອງປະມູນທີ່: ຫ້ອງການກະຊວງກະສິກໍາ ແລະ ປ່າໄມ້, ກະຊວງກະສິກໍາ ແລະ ປ່າໄມ້
   - ຊອງປະມູນ: ລາຄາ: 500.000 ກີບ/ຊອງ
   - ເລີ່ມຂາຍຊອງປະມູນ ໃນຕັ້ງວັນທີ 12/09/2022 ໃນໂມງລັດຖະການ.
   - ກໍານົດປິດການຂາຍຊອງ ໃນຕັ້ງວັນທີ 30/09/2022 ເວລາ 14:00 ໂມງ
   - ເວລາການເປີດຊອງປະມູນ ໃນຕັ້ງວັນທີ 30/09/2022 ເວລາ: 14:00 ໂມງ
     ຢູ່ທີ່ ຫ້ອງປະຊຸມ 111 ຫ້ອງການກະຊວງ, ກະຊວງກະສິກໍາ ແລະ ປ່າໄມ້
   - ບ່ອນຕິດຕໍ່ສອບຖາມ: ເອົາຊອງປະມູນທີ່ ຫ້ອງການກະຊວງ, ກະຊວງກະສິກາ ແລະ ປ່າໄມ້ ບ້ານ ໂພນໄຊ ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ: ນາງແກ້ວດວງໃຈ ໄຊຍະວົງ ເບີໂທຕິດຕໍ່: 020 99616181

- <u>ເງື່ອນໄຂຂອງຜູ້ເຂົ້າຮ່ວມປະມູນສົມທຽບລາຄາ ມີດັ່ງນີ້:</u>

1. ບໍລິສັດ/ຫ້າງຮ້ານ ຕ້ອງມີສະຖານທີ່ຕັ້ງທີ່ແນ່ນອນສາມາດກວດສອບໄດ້.
2. ໃບທະບຽນວິສາຫະກິດ (ສໍາເນົາ).
3. ໃບທະບຽນອາກອນປະຈໍາປີ 2022 (ສໍາເນົາ).
4. ເງິນຄໍ້າປະກັນການປະມູນ 2% ຂອງມູນຄ່າການປະມູນເປັນເງິນສົດ ຫຼື ແຊັກທະນາຄານ.
5. ໃບສະເໜີລາຄາທີ່ມີກາຈໍ້າຂອງບໍລິສັດ.
6. ໃບອະນຸຍາດດໍາເນີນທຸລະກິດ ປະຈໍາປີ 2021 (ສໍາເນົາ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

ຫົວໜ້າຫ້ອງການ

ກະຊວງກະສິກໍາ ແລະ ປ...